# ມິຊຊາອາທິດທີ 30 ກຳມະດາ ປີ B
# ວັນທີ 24 ຕຸລາ 2021



**ພຣະວໍລະສານໂດຍນັກບຸນມັກໂກ 10, 46ຂ-52**

ໃນເວລານັ້ນ, ເມື່ອພຣະເຢຊູເຈົ້າສະເດັດອອກຈາກເມືອງເຢຣິໂກພ້ອມດ້ວຍສາວົກ ແລະຝູງຊົນເປັນຈຳນວນມາກ, ກໍມີຄົນຕາບອດຜູ້ໜຶ່ງ, ບຸດຂອງຕີເມ, ນັ່ງຂໍທານຢູ່ແຄມທາງ. ພໍຮູ້ວ່າແມ່ນພຣະເຢຊູຊາວນາຊາແຣັດ, ເຂົາກໍຮ້ອງຂຶ້ນວ່າ: "ເຢຊູ, ບຸດພະຍາດາວິດ ,ສົງສານຂ້ານ້ອຍທ້ອນ!" ມີຫລາຍຄົນຕິບອກເຂົາໃຫ້ມິດ, ແຕ່ເຂົາແຮງຮ້ອງຂຶ້ນດັ່ງກ່າວອີກວ່າ: "ບຸດພະຍາດາວິດເອີຍ, ສົງສານຂ້ານ້ອຍທ້ອນ!" ພຣະເຢຊູເຈົ້າຊົງຢຸດແລະກ່າວວ່າ: "ຈົ່ງເອີ້ນເຂົາມາ."

ເລີຍມີຄົນເອີ້ນເອົາຄົນຕາບອດວ່າ: "ຈົ່ງມີຄວາມໄວ້ໃຈລຸກຂຶ້ນເຖີດ. ພຣະອົງເອີ້ນເຈົ້າ." ຄົນຕາບອດແກ່ວງເສື້ອຢ່າມຖິ້ມ, ແລ້ວໂດດຂຶ້ນແລ່ນໄປຫາພຣະເຢຊູເຈົ້າ. ພຣະອົງຖາມວ່າ: "ເຈົ້າຢາກໃຫ້ເຮົາທຳສິ່ງໃດແກ່ເຈົ້າ?" ຄົນຕາບອດຕອບວ່າ: "ພຣະອາຈານເອີຍ, ໂຜດໃຫ້ຂ້ານ້ອຍໄດ້ເຫັນຮຸ່ງ." ພຣະເຢຊູເຈົ້າກ່າວວ່າ: "ໄປເສຍ, ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າໃຫ້ດີແລ້ວ." ທັນທີ, ຄົນນັ້ນກໍແນມເຫັນ ແລະເດີນທາງຕິດຕາມພຣະເຢຊູເຈົ້າໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ໃນບັນດາຜູ້ທີ່ຕິດຕາມພຣະເຢຊູເຈົ້າບໍ່ມີແຕ່ພວກລູກສິດສິບສອງຄົນ ແລະຝູງຊົນເປັນຈຳນວນມາກເທົ່ານັ້ນ, ແຕ່ວັນນີ້ຍັງມີຄົນຂໍທານຕາບອດນັ່ງຢູ່ແຄມທາງ. ເຂົາຊື່ບາກຕີເມ. ລູກຂອງຕີເມ. ໃນບັນດາຜູ້ທີ່ຕິດຕາມພຣະເຢຊູເຈົ້າມານີ້ກໍມີຜູ້ທີ່ເຫັນພຣະອົງດ້ວຍຕາ, ແຕ່ເຂົາບໍ່ເຊື່ອໃນພຣະອົງ. ແລະກໍມີຜູ້ທີ່ບໍ່ເຫັນພຣະອົງດ້ວຍຕາແຕ່ເຂົາເຫັນພຣະອົງດ້ວຍສາຍຕາແຫ່ງຄວາມເຊື່ອຂອງເຂົາຄືຄົນຂໍທານບາກຕີເມນັ້ນເອງ.

ພວກລູກສິດທີ່ຕິດຕາມພຣະເຢຊູເຈົ້າມາ, ພວກເຂົາຕ່າງກໍມີຄວາມຫວາດຝັນແລະລໍຖ້າສິ່ງໃດສິ່ງໜຶ່ງຈາກພຣະເຢຊູເຈົ້າ. ດັ່ງຢວງແລະຢາໂກເບບຸດຂອງເຊເບເດ, ພວກເຂົາວອນຂໍນຳພຣະເຢຊູເຈົ້າໃຫ້ພວກເຂົາໄດ້ນັ່ງຢູ່ເບື້ອງຊ້າຍແລະເບື້ອງຂວາຂອງພຣະອົງໃນສິມຸງຄຸນ. ໝາຍວ່າພວກເຂົາຢາກເປັນຜູ້ຍິ່ງໃຫຍ່ແລະມີຄົນນັບໜ້າຖືຕາແລະມາຮັບໃຊ້ພວກເຂົາ. ແຕ່ສິ່ງທີ່ພວກເຂົາວອນຂໍບໍ່ຖືກຕ້ອງຕາມນ້ຳພຣະໄທຂອງພຣະເຢຊູເຈົ້າ. ຍ້ອນພຣະອົງບໍ່ໄດ້ເປັນຜູ້ຍິ່ງໃຫຍ່ແຕ່ເປັນຜູ້ຕ່ຳນ້ອຍ. ຍ້ອນພຣະອົງບໍ່ໄດ້ມາເພື່ອໃຫ້ຄົນອື່ນຮັບໃຊ້, ແຕ່ເພື່ອຮັບໃຊ້ຄົນອື່ນແລະມອບຊີວິດຂອງພຣະອົງເອງໃຫ້ພວກເຂົາ.

ສ່ວນຝູງຊົນທີ່ຕິດຕາມພຣະເຢຊູເຈົ້າມາ, ຍ້ອນພວກເຂົາໄດ້ເຫັນພຣະເຢຊູເຈົ້າທຳອັດສະຈັນຫລາຍຢ່າງ: ຂັບໄລ່ຜີປີສາດ, ປິ່ນປົວຄົນເຈັບໄຂ. ແລະເປັນຕົ້ນພຣະອົງໄດ້ທະວີເຂົ້າໜົມປັງເພື່ອລ້ຽງເກືອພວກເຂົາ. ດ້ວຍເຫດນີ້, ພວກເຂົາຈິ່ງຢາກໃຫ້ພຣະອົງເປັນກະສັດເພື່ອຊ່ວຍເຫລືອພວກເຂົາ. ແຕ່ພຣະເຢຊູເຈົ້າກໍປະຕິເສດສິ່ງທີ່ຝູງຊົນຢາກໃຫ້ພຣະອົງເປັນ.

ວັນນີ້, ແມ່ນບາກຕີເມ, ຄົນຂໍທານຕາບອດ. ແທນທີ່ເຂົາຈະຂໍພຣະເຢຊູເຈົ້າສິ່ງທີ່ສາມາດຊ່ວຍເຂົາໃຫ້ມີຊີວິດຢູ່ໄດ້. ແຕ່ເຂົາພັດຂໍພຣະອົງຊ່ວຍເຂົາໃຫ້ເຫັນຮຸ່ງ. ແລະສິ່ງທີ່ຊ່ວຍເຂົາໃຫ້ຫາຍດີຈາກຄວາມມືດບອດນັ້ນບໍ່ແມ່ນຍ້ອນອັດສະຈັນການປິ່ນປົວທີ່ມາຈາກພຣະເຢຊູເຈົ້າ, ແຕ່ແມ່ນຍ້ອນຄວາມເຊື່ອຂອງເຂົານັ້ນເອງ. ເພາະພຣະເຢຊູເຈົ້າກ່າວກັບບາກຕີເມວັນນີ້ວ່າ: "ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າໃຫ້ຫາຍດີແລ້ວ". ແລະຄວາມເຊື່ອນີ້ທຳໃຫ້ບາກຕີເມສະລະທຸກຢ່າງແລະຕິດຕາມພຣະອົງໄປບົນເສັ້ນທາງມຸ່ງສູ່ເຢລູຊາແລມ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ເຫັນພຣະອົງ. ບໍ່ພຽງແຕ່ດ້ວຍສາຍຕາຂອງລູກເທົ່ານັ້ນ, ແຕ່ດ້ວຍສາຍຕາແຫ່ງຄວາມເຊື່ອຂອງລູກອີກດ້ວຍ. ເພື່ອລູກຈະໄດ້ເຫັນຄວາມຮັກທີ່ພຣະອົງມີຕໍ່ລູກ. ເພື່ອລູກຈະໄດ້ຜັນປ່ຽນຊີວິດແລະຍອມສະລະທຸກສິ່ງຢ່າງແລະຕິດຕາມພຣະອົງໄປບົນເສັ້ນທາງແຫ່ງຄວາມຮອດດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ